ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ຫ້ອງການ

ເລກທີ 24 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 03 ກຸມພາ 2022

# ເຊີນເຂົ້າຮ່ວມການປະມູນ

ເຖິງ: ບັນດາ ບໍລິສັດ ແລະ ໂຮງພິມ ທີ່ມີຄວາມສົນໃຈ ທີ່ນັບຖື.

ເລື່ອງ: ເຂົ້າຮ່ວມການປະມູນຜະລິດຫຼຽນປະເພດຕ່າງໆ ແລະ ພິມໃບຮັບປະກັນຫຼຽນ ແລະ ໃບຍ້ອງຍໍ ຂອງກະຊວງພາຍໃນ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະຊວງພາຍໃນ ສະບັບເລກທີ 95 /ພນ, ລົງວັນທີ 12 ມີນາ 2018;
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30 /ສພຊ, ລົງວັນທີ 02 ພະຈິກ 2017, ພາກທີ III ໝວດທີ 1, ມາດຕາ 18 ແລະ 19;
- ອີງຕາມ ແຈ້ງການຂອງກະຊວງການເງິນ ສະບັບເລກທີ 2759 /ຫກງ, ລົງວັນທີ 12 ກຸມພາ 2021.

ໃນປີ 2022 ກະຊວງພາຍໃນ ຈະໄດ້ມີການຜະລິດຫຼຽນ, ໃບຄໍ້າປະກັນຫຼຽນ ແລະ ໃບຍ້ອງຍໍ. ສະນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາ ບໍລິສັດ ແລະ ໂຮງພິມ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ການຜະລິດຫຼຽນປະເພດຕ່າງໆ ແລະ ພິມໃບຮັບປະກັນຫຼຽນ ແລະ ໃບຍ້ອງຍໍ ຂອງກະຊວງພາຍໃນ.

ເຊິ່ງຈະເລີ່ມຂາຍຊອງປະມູນ ນັບຕັ້ງແຕ່ວັນທີ 03 ກຸມພາ ຫາ 01 ມີນາ 2022 ແລະ ການເປີດຊອງປະມູນຈະໄດ້ຈັດຂຶ້ນໃນວັນທີ 04 ມີນາ 2022, ເວລາ 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 3 ຕຶກໃໝ່ (**ຂາຍຊອງປະມູນການຜະລິດຫຼຽນ ຊອງລະ 1.000.000 ກີບ ແລະ ຜະລິດໃບຮັບປະກັນຫຼຽນ ແລະ ໃບຍ້ອງຍໍ ຊອງລະ 500.000 ກີບ**).

ທ່ານສາມາດສອບຖາມຂໍ້ມູນ ແລະ ພົວພັນຊື້ຊອງປະມູນ ໄດ້ທີ່: ພະແນກບໍລິຫານ ແລະ ຄຸ້ມຄອງ ຫ້ອງການກະຊວງພາຍໃນ ເບີໂທລະສັບ 021 212545-112 ໃນວັນລັດຖະການ.

❖ ເງື່ອນໄຂຂອງບໍລິສັດເຂົ້າຮ່ວມການປະມູນ ມີດັ່ງນີ້:

1. ຕ້ອງມີໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ ປີ 2021 ໃບຢັ້ງຢືນການມອບພັນທະອາກອນປີ 2020, ທີ່ຕັ້ງບໍລິສັດ, ໃບຢັ້ງຢືນຖານະການເງິນຈາກທະນາຄານໃດໜຶ່ງຢູ່ ສປປ ລາວ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ;
2. ບໍລິສັດ ທີ່ຊະນະການປະມູນຕ້ອງຮັບຜິດຊອບໃນການຈ່າຍຄ່າພາສີ, ອາກອນຕ່າງໆ ແລະ ເງິນຄໍ້າປະກັນຊອງປະມູນ 2% ຂອງມູນຄ່າ.

❖ ເອກະສານເຈົ້າຂອງໂຄງການປະກອບໃຫ້ມີ:

1. ມາດຕະຖານເງື່ອນໄຂຂອງຫຼຽນແຕ່ລະປະເພດ, ໃບຮັບປະກັນ ແລະ ໃບຍ້ອງຍໍ;
2. ຈໍານວນຂອງຫຼຽນແຕ່ລະປະເພດ, ໃບຮັບປະກັນ ແລະ ໃບຍ້ອງຍໍ ທີ່ຕ້ອງການຜະລິດ ແລະ ຈັດພິມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ແລະ ໂຮງພິມຕ່າງໆ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້.

ດ້ວຍຄວາມນັບຖື.

ຣ ຫົວໜ້າຫ້ອງການ

ຫ້ອງການ

ພອນໄຊ ວົງດາລາ

ເບີໂທຕິດຕໍ່ພົວພັນ

ທ່ານ ວຽງປະສິດ ໄຊຍະເສນ 5621110

ທ່ານ ນິດສາ ດວງປັນຍາ 020 22943483

27.500.000